ຂ່າວຈາກມວນຊົນລາວເສຣີຊົນ ຜູ້ຍິງບໍຣິການໃນວຽງຈັນສ່ຽງໂລກເອດສູງສຸດ-ພາບ
ຈາກເວັບຊາຍທີ່ບໍ່ໄດ້ຣະບຸວັນທີພາບນີ້ບອກວ່າເປັນຮ້ານກິນດື່ມແລະບາແຫ່ງນຶ່ງໃນ
ນະຄອນຫລວງວຽງຈັນທາງການລາວກ່າວວ່າສະຖານບັນເທີງທີ່ມີຜູ້ຍິງບໍຣິການເປັນ
ແຫ່ງທີ່ສ່ຽງຕໍ່ການແຜ່ ກະຈາຍເຊື້ອເອຊໄອວີ-ເອດສ໌ ຜູ້ຍິງບໍຣິການຕາມແຫ່ງບັນເທີງ
ຕ່າງໆຍັງເປັນກຸ່ມສ່ຽງທີ່ສຸດໃນການຕິດເຊື້ອເອດສ໌ ໃນລາວແລະເຖິງແມ່ນວ່າຈຳນວນ
ຜູ້ປ່ວຍ ໂຣກນີ້ຈະຍັງມີບໍ່ຫຼາຽແຕ່ໃນຊົ່ວເວລາຂ້າມປີທີ່ຜ່ານມາມີຈຳນວນຜູ້ປ່ວຍທີ່ເຂົ້າ
ຮັບການຮັກສາແລະອາດລວມເຖິງຈຳນວນຜູ້ທີ່ເສັຽຊີວິດດວ້ຽ ໂລກນີ້ອີກດ່ວຽກໍ່ສູງເຖິງ
80% ທາງເຈົ້າໜ້າທີ່ລາວເປີດເຜີຍຕົວເລຂນີ້ໃນທິດຜ່ານມາຣັຖມົນຕຣີຊ່ວຍວ່າການກະ
ຊວງສາທາຣະນະສຸກຂອງລາວຄືນາຍຄຳຣຸ່ງເຮືອງວົງສາໄດ້ກ່າວວ່າໃນປີ ພ ສ-2549
ນັ້ນມີຜູ້ໄປຂໍຮັບການຮັກສາອາການກ່ຽວກັບ ໂລກຜູ້ບໍ່ຄຸ້ມກັນບົກພ່ອງຕາມ ໂຮງພະຍາບານ
ຢູ່ແຫ່ງຕ່າງໆທົ່ວປະເທດຈຳນວນ 470 ລາຍເອດສ໌ແຕ່ຕົວເລຂໃນປັດຈຸບັນຄືມີ  870
ລາຍ ຈະເຫັນໄດ້ວ່າພຽງຊົ່ວເວລາຂ້າມປີຈຳນວນຜູ້ປ່ວຍດ້ວຍໄວຣັດເອຊໄອວີເອດສ໌ ຄິດ
ເປັນອັດຕຣາເພີ້ມເຖິງ 85-% ຣັຖມົນຕຣີລາວກ່າວຕໍ່ໄປວ່າສາຍເຫດທີ່ຈຳນວນຜູ້ປ່ວຍ
ເພີ້ມສູງຫລາຽຊັ່ນນີ້ເນື່ອງຈາກການນະຣົງຕໍ່ຕ້ານ ໂລກເອດສ໌ທີ່ຍັງມີນອ້ຽແລະເຂົ້າໄປບໍ່
ເຖິງຊຸມຊົນທີ່ຢູ່ຫ່າງໄກລວມທັງສະຖານບັນເທີງທີ່ສ່ຽງຕໍ່ການແຜ້ເຊື້ອໄວຣັດເອຊໄອວີ
ເອດສ໌ ທີ່ເພີ້ມຈຳນວນຂຶ້ນຢ່າງຮວດເຮັວການຕິດເຊື້ອເອດສ໌ ໃນລາວຍັງມີນອ້ຽຫາກທຽບ
ກັບປະເທດອື່ນໆ ແຕ່ເຮົາຍັງຕອ້ງນະຣົງສ້າງການຮັບຮູ້ກ່ຽວກັບເຊື້ອ ໂຣກຊນິດນີ້ແລະ
ໃຫ້ມີຫລັກປະກັນວ່າປະຊາຊົນຈະຮູ້ວິທີປອ້ງກັນແລະປົກປອ້ງຕົວເອງໃນສະຖານະການ
ທີ່ມີຄວາມສ່ຽງສູງ-ສຳນັກຂ່າວຊິນຫົວຂອງຈີນອ້າງຄຳກ່າວຂອງຣັຖມົນຕຣີລາວຣູບ
ລາວເຖິງແມ່ນທາງການຈະເຜີຍແຜ່ຕົວເລຂແຕ່ພຽງວ່າ ຈົ່ນເຖິງປັດຈຸບັນມີຜູ້ເຂົ້າຂໍ
ຮັບການຮັກສາອາການເອດສ໌ພຽງ 870 ລາຍແຕ່ຕົວເລຂຂອງອົງການແພດໄຮ້ພົມ
ແດນmedecin sanfrontier{ ຣະວ່າງປັດຈຸບັນທົ່ວປະເທດມີຜູ້ຕິດເຊື້ອໄວຣັສ ໂລກຮ້ຽນີ້
600 ເຖິງ-3,600 ຄົນ ນາຍຄຳຣຸ່ງໄດ້ຮຽກຮອ້ງໄປຫາເຈົ້າໜ້າທີ່ສ່ວນຕ່າງໆ ຈັດນະ
ຣົງສ້າງການຮັບຮູ້ໃນໝູ່ເຍົາວະຊົນແລະກຸ່ມສ່ຽງຕ່າງໆກ່ຽວກັບໄພອັນຕຣາຍຈາກ ໂລກ
ເອດສ໌ອີກດວ້ຽ-ໃນປັດຈຸບັນອົງກອນພັທນາເອກຊົນ ທີ່ບໍ່ສັງກັດຣັຖບານຫຼືເອນຈີໂອ
ຫລາຽແຫ່ງຍັງຄົງອອກປະຕິບັດງານນະຣົງໃຫ້ຄວາມຮູ້ກ່ຽວກັບການປອ້ງກັນ ໂລກ
ເອດສ໌ໃນລາວ ຮ່ວມທັງອົງການແພດໄຮ້ພົມແດນ( medecin san frontier)ກັບອົງການ
ເພື່ອອານາມັຍຄອບຄົວຣະຫວ່າງປະເທດ(family healthinternational) ດ້ວຍແພດໄຮ້

ພົມແດນໄດ້ລາຍງານກ່ຽວກັບສະຖານະການ ໂລກເອດສ໌ ໃນລາວປະຈຳປີ 2549 ວ່າສຖານຮັກສາພະຍາບານຜູ້ປ່ວຍ ໂລກນີ້ໃນລາວມີຢູ່ແຂວງສວັນນະເຂດພຽງແຫ່ງດຽວແລະຜູ້ປ່ວຍສ່ວນໃຫ່ຍໄປຈາກນະຄອນຫລວງວຽງຈັນທນ໌ (msf)ບໍ່ໄດ້ໃຫ້ໂຕເລຂຈຳນວນຜູ້ປ່ວຍດວ້ຍ ໂລກເອດສ໌ ໃນປະເທດນີ້ ແຕ່ອ້າງພົບສຳດວດຂອງຜູ້ປະຕິບັດງານວ່າໃນປີ 2549 ອາດຈະມີຜູ້ຕິດເຊື້ອໄວຣັດເອຊໄອວີຣະຫວ່າງ 600-ຫາ-3 600 ລາຍ ໂດຍກຸ່ມສ່ຽງສຳຄັນກໍ່ຍັງເປັນຍິງບໍຣິການໃນທຸຣະກິດບັນເທີງພາບທ່ຽ ໃນເດືອນ-ກ ຄ 2550 ເຈົ້າໜ້າທີ່ຂອງອົງການ -familyhealth internktionkl(fhi )ອອກນະຣົງໃຫ້ຮູ້ກ່ຽວກັບ ໂລກເອດສ໌ ໂດຍໄຊ້ວິທີເລ່ນເກມຕາມພາບກົດໝາຽ ອາຍາຂອງ ສປປ ລາວ ມີບົດບັນຍັດລົງ ໂທດປັບຫຼືຈຳຄຸກຍິງຫຼືຊາຍທີ່ມີເພດສັມພັນກັບອີກຝ່າຍນຶ່ງທີ່ບໍ່ໄຊ້ສາມີຫຼືພັລຍາ ຂອງຕົນເພາະສະນັ້ນການຄ້າປະເພນີແລະການຂາຍບໍຣິການທາງເພດຮູບແບບຕ່າງໆ ຈຶ່ງເປັນສິ່ງທີ່ຜິດກົດໝາຽ-ຢ່າງໃດກໍຕາມຕົວເລຂສະຖິຕິທີ່ເປັນທາງການໃນປາຍປີ 2548 ຣະບຸວ່າຜູ້ຍິງບໍຣິການໃນທຸຣະກິດບັນເທີງນັ້ນເປັນກຸ່ມສ່ຽງສຳຄັນກຸ່ມນຶ່ງໃນນັ້ນ 39,7% ຂອງຜູ້ຍິງບໍຣິການໃນນະຄອນຫລວງວຽງຈັນທ໌ ຕິດເຊື້ອເອຊໄອວີເອດສ໌ -ເມື່ອເລວໆມານີ້ສຳນັກຂ່າວ -ຂ່າວສານປະເທດລາວໄດ້ອອກລາຍງານຊິ້ນ ກ່ຽວກັບພຶດຕິກັມທາງເພດຂອງເຍົາວະຊົນທີ່ເປື້ອນໄປໃນຂນະທີ່ປະເທດກຳລັງເຮັ່ງພັທນາຄວາມຈະເຣີນຮຸ່ງເຮືອງທາງເສຖກິດແຕ່ເກີດບັນຫາທຳໃຫ້ຜູ້ຍິງຂາຍບໍຣິການມີຈຳນວນເພີ້ມຂຶ້ນ ບັນຫານີ້ກຳລັງທະວີຄວາມຮຸນແຮງຕາມຕົວເມືອງໃຫ່ຍໆທີ່ມີເຂດແດນຕິດຕໍ່ກັບປະເທດເພື່ອນບ້ານ

### ຈີນ ວຽດນາມແລະໄທຍ໌ ເຮັດສວນຢາງຢູ່ລາວກວ່າລ້ານໄຮ່

ພາບຖ່າຍໃນວັນທີ 24 ພ ຍ 2550 ຕົ້ນຢາງໃນສວນຢາງຢູ່ແຂວງບໍລິຄຳໄຊຂອງນັກລົງທຶນຈາກວຽດນາມ ສະຖາບັນວິຈັຍການກະເສດຂອງລາວວ່າປັດຈຸບັນນີ້ຍັງມີພື້ນທີ່ຕຽມປູກຢາງອີກກວ່າ 1 ລ້ານໄຮ່ອັນນີ້ຄືຮູບພັກຣັຖທໍາລາຍຊັບພະຍາກອນຂອງຊາດແລະສິ່ງແວດລອ້ມຕ່າງໆໃນລາວເປີດໄປຂ່າວຈາກມວນຊົນລາວເສຣີຊົນ ບໍ່ພໍປີມານີ້ນັກລົງທຶນຂອງຈີນແລະວຽດນາມໄດ້ຂຍາຍພື້ນທີ່ປູກຢາງພາຣາໃນປະເທດຢ່າງກວ້າງຂວາງຊຶ່ງແຫຼ່ງຂ່າວທີ່ຊາບເຣື້ອງອີກກ່າວວ່າ ມີການຕຽມພື້ນທີ່ອີກກວ່າ 1 ລ້ານໄຮ່ສຳຫຣັບປູກຢາງພາຣາ-ນັກລົງທຶນຈີນໄດ້ຍຶດທົ່ວໃນແຂວງພາກເໜືອຂອງລາວທຳສວນຢາງແລະກຳລັງຂຍາຍພື້ນທີ່ອອກໄປຢ່າງບໍ່ຢຸດຢັ້ງຂນະທີ່ຣາຄາໃນຕຣາດ ໂລກຍັງສູງແລະຣາສດອນຊາວລາວທີ່ເຂົ້າຮ່ວມ ໂຄງການມີລາຍໄດ້ທີ່ດີເປັນທີ່ພໍໃຈຂອງທຸກຝ່າຍນັກລົງທຶນຈາກຈີນໄດ້

ເຂົ້າທຳສວນຢາງໃນແຂວງຫົວພັນທາງພາກຕາວັນອອກສຽງເໜືອແຂວງຊຽງຂວາງ
ທີ່ຢູ່ຕິດກັນກັບແຂວງນ້ຳທາ່ຕອນພົງສາລີແລະບໍ່ແກ້ວ ທາງຕາວັນຕົກຕາມລາຍງານ
ຂອງສະຖາບັນວິຈັຍການກະເສດແລະປາ່ໄມ້ຂອງລາວ(nationalagriculture and forestry
research institute of laos)ຫຼື nafeil (ນັກລົງທຶນຈາກຈີນຍັງມີໂຄງການປູກຢາງພາຣາ
ອີກຫລາຽແຫ່ງການສຳຣວດເມື່ອປີ 2549 ໂດຍ(nafril )ໄດ້ພົບວາ່ມີສວນຢາງພາຣາ
ຄອບຄຸມພື້ນທີ່ 11-778 ເຮກຕາ(53-612 ໄຣ່)ແຕ່ກຳລັງຈະມີການປູກບົນເນື້ອທີ່ອີກ
181-840 ເຮກຕາ(1-136-500 ໄຣ່)ທັງນີ້ເປັນລາຍງານຂອງສຳນັກຂາ່ວອອນໄລ
ເອເຊັຽທາມ(asiatimesOnline)ນັກລົງທຶນຈາກຈີນເຣີ່ມເຂົ້າທຳສວນຢາງໃນລາວມາຕັ້ງ
ແຕ່ປີ 2545 ພໍມາເຖິງປີ 2547ກໍ່ມີການຣະດົມທຶນເຂົ້າປູກພືດເສຖກິດສບືດນີ້ຢາ່ງຂນານ
ໃຫ່ຽ ຈົ່ນທຳໃຫ້ຈີນສາມາດຣົດແຊງໜາ້ນັກລົງທຶນໄທຍແລະວຽດນາມໃນຖານະຜູ້ລົງທຶນ
ໃຫ່ຽໃນລາວ ເມື່ອຕົ້ນປີນີ້ບໍຣິສັດໄທຍຣົ້ວຢາງພາຣາຈຳກັດມະຫາຊົນອັນນີ້ເຜ່ນສວ່ນ
ນັກລົງທຶນຈີນຍຶດຫົວຫາດໃນ 5 ແຂວງພາກເໜືອຂອງລາວເປັນສວນເນື່ອງຈາກມີຊາຍ
ແດນຕິດກັບມົນທົນຫຍຸດໜັນ ສາມາດລັບຊື້ຜົນຜລິດສົ່ງກັບປະເທດໄດ້-afp-ຂນາດໃຫ່ຽ
ອັນດັບ 2 ຈາກສາທາຣະນະຣັຖປະຊາຊົນຈີນຂຍາຍການປູກຢາງ ພາຣາໃນ 6 ແຂວງ
ລວມເປັນເນື້ອທີ່ປະມານ 30-000 ເຮກຕາ ຫຼືວາ່ 187-000 ໄຣ່ ກອ່ນໜາ້ນັ້ນບໍຣິສັດ
ດັ໊ກລັກລັບເບີ(dak lak rubber co)ຈາກດັ໊ກລັກ ຂອງວຽດນາມໄດ້ຮັບອະນຸຍາດເຂົ້າທຳ
ສວນຢາງໃນເນື້ອທີ່ກວາ່ 20-000 ໄຣ່ ກອ່ນໜາ່ນັ້ນບໍຣິສັດຂອງຣັຖບານວຽດນາມອີກ
ແຫ່ງນຶ່ງກໍ່ໄດ້ຮັບອະນຸຍາດຈາກທາງການລາວເຂົ້າທຳສວນຢາງເນື້ອທີ່ນັບແສນໄຣ່ໄປ
ແລ້ວໃນແຂວງພາກໄຕ້ຂອງປະເທດໃນການລົງທຶນຂອງນັກລົງທຶນຈີນໄທຍແລະວຽດນາມ
ມີທັງໃນຮູບແບບເຊົ່າທີ່ດິນຢາ່ງບໍ່ໄດ້ເສັຽພາສີ-30 ປີທຳສວນຢາງໂດຍຕົງຊຶ່ງມີນາຍ
ຈາ້ງແຮງງານໃນທອ້ງທິ່ນຢາ່ງເງິນພອ່ນ ກັບອີກຢາ່ງນຶ່ງຄືຮູບແບບກະເສດພັນທະສັນ
ຍາ( contractfarming) ໂດຍສົ່ງເສີມໃນກະເສຕກອນລາວປູກຢາງໃນດິນຂອງຕົນເອງ ຜູ້
ລົງທຶນຮັບຊື້ຜົນຜລິດໃນຣາຄາປະກັນເຊື່ອ-ກະເສຕກອນລາວທີ່ເຂົ້າຣວ່ມໂຄງການມີ
ລາຍໄດ້ປີຣະ 6000-8000 ດອນລາຈາກສວນຢາງ 1 ເຮກຕາ(6-25 ໄຣ່)ເປັນຣາຍ
ໄດ້ທີ່ດີກວາ່ພືດເສຖກິດອື່ນໆ ຣວມທັງຈາກການທອ່ງທຽ່ວເຊີ່ງນິເວດດວັຍ ໃນປີ 2549
ກະເສຕກອນລາວຜລິດຢາງໄດ້ 1-360 ກກ ຕໍ່ເຮກຕາໃນນັ້ນສາ້ງກຳໄລໃຫ້ປະມານ
800 ດອນລາທຽບກັບການທຳນາຊຶ່ງໄດ້ເຂົ້າ 1-500 ກກ ຕໍ່ເຮກຕາແລະມີກຳໄລພຽງ
146 ດອນລາຫຼືການປູກຝິ່ນຊຶ່ງໄດ້ຝິ່ນດິບ 8 ກກ ຕໍ່ເຮກຕາກຳໄລ 903 ດ ລ ປັດຈຸບັນ

ໃນຈີນຜລິດຢາງໄດ້ພຽງ 4 ລ້ານຕັນຕໍ່ປີຄາດວ່າໃນປີ 2563 ຈະຕ້ອງໃຊ້ເຖິງ 30% ຂອງຄວາມຕ້ອງການໃນທົ່ວໂລກນັ້ນ ຄື 11-5 ລ້ານຕັນຕໍ່ປີ ແຊງໜ້າສະຫະຣັຖຊຶ່ງເມື່ອປີ 2545 ບໍຣິໂພກຢາງ 3-45 ລ້ານຕັນຫຼື 18-2% ຂອງປຣິມານທົ່ວໂລກໃນປີນັ້ນຄວາມຕ້ອງການໃຊ້ຢາງທີ່ເພີ້ມຂຶ້ນຢ່າງມາກມາຍໃນຈີນໄດ້ທຳໃຫ້ຣາຄາໃນຕລາດໂລກຟຸ່ງຂຶ້ນ ສຳນັກຂ່າວລູມເບີຣາຍງານເມື່ອມໍ່ໆມານີ້ ອ້າງຣາຍງານຂອງສະມາຄົມອຸດສະຫະກັມຢາງຈີນ(china rubber industry association )ທີ່ຄາດວ່າໃນປີ 2556 ຄວາມຕ້ອງການຢາງໃນຈີນຈະຟຸ່ງຂຶ້ນ 35%ເປັນ 6-83 ລ້ານຕົນ ເມື່ອສນອງຄວາມຕ້ອງການດັ່ງກ່ວວ່າ ໃນພາກຕາວັນອອກສຽງເໜືອຂອງລາວພຽງແຫ່ງດຽວ ປັດຈຸບັນຈີນໄດ້ທຸ້ມລົງທຶນທຳສວນຢາງພາຣາບໍ່ຕໍ່າກວ່າ 20 ລ້ານດອນລາ ຈາກການລົງທຶນເຮັດສວນ ຈາກຈີນທັງເບີດມູນຄ່າ 26 ລ້ານດອນລາໃນແຂວງເລົ່ານັ້ນ ຂນະທີ່ການປູກຢາງພາຣາກຳລັງຂຍາຍອອກໄປຢ່າງກວ້າງກໍ່ໄດ້ທຳໃຫ້ເກີດຄວາມຫວ່ງໄຍຕໍ່ສະພາບແວດລອ້ມຂຶ້ນມາທາງການລາວໄດ້ພົບວ່າມີການຂຍາຍພື້ນທີ່ເພາະປູກຣຸກລໍ້າເຂົ້າໄປໃນເຂດປ່າສງວນແຫ່ງຊາດຢ່າງກວ້າງຂວາງໃນທຶດທີ່ແລ້ວສະພາແຫ່ງຊາດລາວໄດ້ຝ່ານຮ່າງແກ້ໄຂກົດໝາຽປ່າໄມ້ອອກມາບັງຄັບໃຊ້ຊຶ່ງໃນນັ້ນມີການເຈາະຈົງກ່ຽວກັບພື້ນດິນຜຶດປ່ຢາງຊັດເຈັນແລະຫ້າມ ໂຄງການລົງທຶນການກະເສດຕ່າງໆ ການຣຸກປ່າສງວນຢ່າງເດັດຂາດແປງປູກຕົ້ນຄາຫລິບອັນທີ່ໄດ້ຮັບການສນັບສນູນຈາກທະນະຄານພັທນາເອເຊັຽ ທີ່ບ້ານເຫລົ່າຄາແຂວງຄຳມວ່ນໃນພາກໄຕ້ຂອງລາວ ເມື່ອກອນບໍ່ມີໃຜຄິດວ່າໂຄງການປູກປ່າເຊັ່ນນີ້ຈະເປັນບັນຫາໃນຣະຍະຍາວ -<u>ຂ່າວມວນຊົນລາວເສຣີຊົນ</u> ນັກລົງທຶນຕ່າງປະເທດທີ່ກຳລັງມຸ້ງໜ້າເຂົ້າລາວເພື່ອສແວງຫາທີ່ດິນພືນໃຫ່ຽສຳຣັບການລົງທຶນໃນຣະຍະ 25-ຫາ-30 ປີອາດຕ້ອງຜິດຫວັງ ເມື່ອສະພາແຫ່ງຊາດທີ່ກຳລັງຈະເປີດປະຊຸມສມັຍສາມັນປາຍປີຜ່ານກົດໝາຽ 2 ສບັບອອກມາໃຊ້ບັງຄັບກ່ຽວກັບການອະນຸຣັກປ່າສງວນແລະການເຊົ່າທີ່ດິນຂອງນັກລົງທຶນຊຶ່ງໃນປັດຈຸບັນກຳລັງສົ່ງຜົນກະທົບຕໍ່ຣາສດອນໃນທອ້ງຖິ່ນຕ່າງໆ ຢ່າງກວ້າງຂວາງ ບໍ່ພຽງແຕ່ທີ່ດິນພືນງາມຈະຫາໄດ້ຍາກຂຶ້ນເທົ່ານັ້ນ ແຕ່ອັດຕຣາຄ່າເຊົ່າກໍ່ກຳລັງຈະສູງຂຶ້ນອີກດວ່ຽໃນຊວ້ງປີໄກ້ໆມານີ້ນັກລົງທຶນຕ່າງຊາດ ໂດຍສະເພາະຢ່າງຍິ່ງມາຈາກປະເທດເພື່ອນບ້ານ ມີຈຳນວນບໍ່ນອ້ຽໄດ້ເຂົ້າໄປສແວງຫາທີ່ດິນແລະເນື້ອທີ່ນັບໝື່ນຫຼືນັບແສນໄຣ່ ເພື່ອປູກພືດອຸດສະຫະກັມຫລາຽສນິດເປັນວັດຖຸດິບປອ້ນໂຮງງານ - ໂຄງການສຳປະທານຫລາຽແຫ່ງກຳລັງຣຸກລໍ້າເຂົ້າໄປໃນປ່າສງວນແຫ່ງຊາດແລະປ່າຕົ້ນນໍ້າລຳທານທີ່ສ້າງຜົນກະທົບຕໍ່ສະພາບແວດ

ລ້ອມປ່າງໃຫຍ່ຫລວງ ແຕ່ນີ້ໄປການບຸກຣຸກປ່າໂດຍ
ອ້າງສັນຍາສັມປະທານທີ່ດິນຈະຕ້ອງຍຸດຕິລົງ ເມື່ອມໍ່ໆມານີ້ຄນະຣັຖມົນຕຣີຂອງລາວ
ໄດ້ອະນຸມັດຮ່າງກົດໝາຍສບັບນຶ່ງທີ່ຮຽກວ່າ ຮ່າງຣັຖບັນຍັດວ່າດ້ວຍອັດຕຣາຄ່າເຊົ່າ
ຫຼືສັມປະທານທີ່ດິນຂອງຣັຖແລະຊັພຍາກອນທັມມະຊາດ ຊຶ່ງຈະມີການຈຳກັດຂນາດ
ຂອງທີ່ດິນເຊົ່າລວມທັງປະເພດຂອງທີ່ດິນທີ່ເຊົ້າບໍ່ໄດ້ຫຼືບໍ່ສາມາດຈະອອກສະໂນດໃຫ້
ໄດ້ຊຶ່ງກຳລັງຈະເປັນຄັ້ງແລກ ດິນທີ່ນີ້ເຄີຍເປັນຜືນປ່າທີ່ ອຸດົມສົມບູນໃນເຂດພູເຂົາ
ຫີນປູນແຂວງຄຳມ່ວນກ່ອນຈະຖືກທາງໃຫ້ຕຽມເພື່ອປູກຍຸຄາລິບຕັດພືດ ປ່າຖືກຣຸກລ້ຳ
ໂດຍທຶນຈາກຕ່າງຊາດດ້ວຍຄ່າເຊົ່າຖືກໆໄຣ່ລະ 1 ດອນລາ ຕໍ່ປີເທົ່ານັ້ນຕາມເອກສານ
ຣາຍງານການປະຊຸມ ຄຣມ ລາວມວນຊົນລາວເສຣີຊົນຣາຍວັນ ໄດ້ຣັບໃນທິດທີ່ຜ່ານ
ມາຮ່າງຣັຖບັນຍັດດັ່ງກ່າວຈະນຳເຂົ້າສູ່ການພິຈາຣະນາຂອງສະພາແຫ່ງຊາດທີ່ກຳລັງ
ຈະເປີດການປະຊຸມສມັຍສາມັນປາຍປີໃນເດືອນ ທ ຄ ນີ້-ຢ່າງໃດກໍ່ຕາມ ຄຣມ ລາວໄດ້
ມີກຳຊັບໃຫ້ໜ່ວຍງານທີ່ກ່ຽວຂ້ອງພິຈາຣະນາໃນລາຍຣະອຽດຢ່າງຮອບຄອບ -ເພື່ອໃຫ້
ສອດຄ່ອງກັບບັນດານິຕິກັມທີ່ປະກາດໄປແລ້ວ ແລະ ໃຫ້ສອດຄ່ອງຕໍ່ຜົນປະໂຍດແລະ
ການປະຕິບັດນະໂຍບາຍສົ່ງເສີມແລະດຶງດູດການລົງທຶນ -ອົງການຄຸ້ມຄອງທີ່ດິນແຫ່ງ
ຊາດເປີດເຜີຍເມື່ອຕົ້ນປີນີ້ວ່າ ທີ່ຜ່ານມາຣັຖບານເກັບຄ່າເຊົ່າທີ່ດິນສັມປະທານຕ່າງໆ
ໃນອັດຕາທີ່ຕ່ຳເກີນໄປ ກ່າວຄືສູງສຸດກໍ່ບໍ່ເກີນໄຣ່ລະ 1 ດອນລາສະຫະຣັຖ ຕໍ່ປີ ຊຶ່ງຈະ
ຕ້ອງມີການແກ້ ໄຂໃຫ້ເປັນທັມພອມອອກກົດຣະບຽບກ່ຽວກັບການເຊົ່າກຳໜົດຣະຍະ
ເວລາໃນການເຊົ່າແລະກົດເກນການໃຫ້ສັມປະທານ ໂຄງການລົງທຶນທີ່ຈະຕ້ອງໃຊ້ທີ່ດິນ
ຈຳນວນຫລາຍ -ຕາມລາຍງານຂອງຊື່ທາງການໜ່ວຍງານນີ້ໄດ້ຈັດການປະຊຸມສັມມະ
ນາຫລາຍຄັ້ງ ເພື່ອຫາມາຕການທີ່ເໝາະສົມໃນການຈັດການກັບບັນຫາເພື່ອໃນການ
ການພັທນາເສຖກິດສັງຄົມຂອງຊາດຄ່ອງກັບການອະນຸຮັກສະພາບແວດລ້ອມລົດຜົນ
ກະທົບຕໍ່ຊີວິດຄວາມເປັນຢູ່ຂອງປະຊາຊົນໃນທ້ອງຖິ່ນ -ອົງການນີ້ຣະບຸວ່າໃນປີໃກ້ໆນີ້
ນັກລົງທຶນຕ່າງຊາດຈຳນວນນຶ່ງໄດ້ໄຊ້ສັນຍາສັມປະທານບຸກລຸກທີ່ດິນໃນເຂດປ່າສງວນ
ແລະປ່າຕົ້ນນ້ຳຫລາຍແຫ່ງ ໂດຍສະເພາະຢ່າງຍິ່ງ ໂຄງການປູກຢ່າງພາຣາແລະພືດ
ເສຖກິດຕ່າງໆຂອງປະເທດ -ຕາມລາຍງານຂອງສຳນັກຂ່າວສານ ປະເທດລາວ -ຂປລ
ສະພາແຫ່ງຊາດກຳລັງຈະພິຈາຣະນາຮ່າງກົດໝາຍອີກຢ່າງນ້ອຍ 8 ສບັບຊຶ່ງທັງ
ກົດໝາຍແກ້ໄຂປ່າໄມ້ດ້ວຍຣັຖບັນຍັດແກ່ກົດໝາຍປ່າໄມ້
ກຳລັງຈະມຸ້ງໄປໃນເຣື້ອງດ້ວຍກັນ -ຕາມລາຍງານ

ຂອງສຳນັກຂ່າວທາງການລາວ ໃນວັນອັງຄານທີ 27-ພ ຍ-ທີ່ຜ່ານມາ ອົງການຄຸ້ມຄອງທີ່ດິນແຫ່ງຊາດ ໂດຍນາຍຄຳອວັນ ບຸບຜາຣັຖມົນຕຣີຫົວໜ້າອົງການໄດ້ຈັດປະຊຸມໜ່ວຽງານສັງກັດເພື່ອຊັກຊ້ອມຄວາມເຂົ້າໃຈວ່າດ້ວຍງານຈັດສັນທີ່ດິນຕາມກົດໝາຽໃໝ່ ໂດຍເຊີນຕົວແທນຈາກໜ່ວຽ ງານກ່ຽວຂ້ອງຕ່າງໆ ເຂົ້າຮ່ວມດ້ວຍການຈັດສັນທີ່ດິນອອກສະໂໜດທີ່ດິນແບ່ງເຂດແບງປະເພດທີ່ດິນເປັນງານທີ່ມີຄວາມສຳຄັນ ໂດຍຕົງຕໍ່ການປັທນາເສຖກິດສັງຄົມແລະປົກປັກຮັກສາສິ່ງແວດລ້ອມຊຶ່ງສັມພັນກັບການດຳລົງຊີວິດຢູ່ທັງໃນແລະນອກເມືອງ ຂປລ ກ່າວວ່າ ອັນທີ່ນີ້ເຄີຍເປັນພື້ນປ່າທີ່ອຸດົມສົມບູນໃນເຂດພູເຂົາຫີນປູນແຂວງຄຳມ່ວນກ່ອນຈະຖືກຖາງໃຫ້ແປນເພື່ອປູກຍູຄາລິບຕັດ ຫລັງຈາກຕັດໄມ້ສົ່ງຈຳໜ່າຽໃນປີ ພ ສ 2543 ດິນທີ່ນີ້ເຫລືອແຕ່ຕໍໃຫ້ເຫັນຈາກພື້ນປ່າທີ່ອຸດົມສົມບູນກາຍເປັນສະພາບປ່ນກາງແລະເສື່ອມຄຸນນະພາບໄປ ອັນນີ້ແລ້ວເພີ່ນຈຶ່ງເວົ້າວ່າຊາດຕ້ອງຢູ່ນຳຜູ້ປົກຄອງທີ່ດີ ຖ້າຜູ້ປົກຄອງບໍ່ຮັກຊາດປະຊາຊົນກໍ່ເສັຽຫາຽແລະຊາດກໍ່ແປ່ນເປົ່າຕໍ່ໄປ ຂປລ ກ່າວວ່າ ທີ່ປະຊຸມຍັງໄດ້ຊີ້ໃຫ້ເຫັນບັນຫາອັນເກີດຈາກການໄຊ້ທີ່ດິນຢ່າງບໍ່ຖືກຕ້ອງ ເຊັ່ນການຕັດໄມ້ທັມມະຊາດເພື່ອປູກຢ່າງພາຣາແລະປູກພືດອື່ນໆ ການບຸກຣຸກເຂົ້າຈັບຈອງທີ່ ໃນເຂດປ່າສງວນຫຼືທີ່ດິນຂອງຣັຖ ໂດຍບໍ່ໄດ້ຮັບອະນຸຍາດໃຫ້ເຊົ່າຫຼືສັມປະທານ ສຳນັກຂ່າວຂອງທາງການລາວກ່າວວ່າທີ່ປະຊຸມຍັງໄດ້ຮັບຟັງລາຍງານກ່ຽວກັບພື້ນປ່າທີ່ພົບວ່າພື້ນທີ່ເລີ້ມຣົດລົງເຣື້ອຍໆ ໃນປັດຈຸບັນຊຶ່ງສົ່ງຜົນກະທົບຕໍ່ເສຖກິດສັງຄົມແລະສະພາບແວດລ້ອມ-ຄວາມວິຕົກກັງວົນໃນເຣື້ອງນີ້ທີ່ໃຫ້ທາງການລາວຢຸດຕິການອະນຸມັດ ໂຄງການລົງທຶນຂນາດໃຫ່ຽທີ່ກ່ຽວພັນກັບການໄຊ້ທີ່ດິນຈຳນວນຫຼາຽແລະມີຣະຍະເວລາສັມປະທານຍາວນານມາຕັ້ງແຕ່ຕົ້ນປີ ທັງນີ້ເພື່ອລໍໃຫ້ຣັຖສະພາຜ່ານກົດໝາຽທັງສອງສບັບອອກມາບັງຄັບໄຊ້

ຍັງມີໂຄງການນຶ່ງທີ່ຖືກແຊ່ມານານ ກໍ່ຄືການປູກເອບເປີ້ນໃນແຂວງຫົວພັນໃນພາກເໜືອ ຊຶ່ງຜູ້ລົງທຶນຂໍທຳສັນຍາພ້ອມກັບການປູກຢາງພາຣາແລະພືດເສຖກິຈອື່ນໆ ທີ່ຈະຕ້ອງໄຊ້ທີ່ດິນຫລາຽໄຣ່ ລາວປິດປ່າຖາວອນ 3 ແຂວງພາກໄຕ້ຂອງນາຍທຶນຕ່າງຊາດບຸກລຸກທີ່ນີ້ ແຕ່ກອນເຄີຍເປັນປ່າກວ້າງໄກສຸດສາຍຕາ ກອນຈະຖືກບຸກລຸກແປສະພາບມາເປັນສວນຍູດາຄິບຕັດ ພືດເສຖກິດທີ່ໄຊ້ທຳເຍື່ອກະດາດປ່າຫລາຽແຫ່ງຖືກຖາງໃຫ້ກຽ້ງເພື່ອປູກຢາງພາຣາກັບປາລົມນ້ຳມັນ ທາງການລາວໄດ້ພົບວ່າມີພື້ນປ່າທັມມະຊາດຖືກບຸກຣຸກປີ'ລະກວ່າ 2-000 ໄຣ່ ໃນ 3 ແຂວງພາກໄຕ້ຈາກມວນຊົນລາວເສຣີຊົນ ເມື່ອທິດພ່ານມາແລ້ວນັ້ນທາງການແຂວງຈຳປາສັກກັບແຂວງໄກ້ຄຽງ

ຊຶ່ງໄດ້ແກ່ສາລະວັນເຊກອງແລະອັຕປື ໄດ້ຮ່ວມກັນປະກາດປິດປ່າສງວນແຫ່ງຊາດ
ຈຳນວນ 2 ແຫ່ງກັບພື້ນປ່າຕົ້ນນ້ຳອີກ 3 ແຫ່ງຢ່າງຖາວອນ ປອ້ງກັນບໍ່ໃຫ້ໂຄງການ
ລົງທຶນຕ່າງໆ ບຸກລຸກ-ພິທີການປະກາດປິດປ່າຢ່າງຖາວອນຈັດຂື້ນໃນວັນທີ 21 ພ ຍ
ທີ່ຜ່ານມາທີ່ເມືອງປາກເຊ ໂດຍມີນາຍ ສຸກັນມະຫາລາດ ເລຂາທິການພັກແຂວງ
ແຂວງຈຳປາສັກດິ໌ ເປັນປະທານມີການນຳຂອງ 3 ແຂວງແລະເຈົ້າເມືອງຈາກ 10
ຕົວເມືອງເຂົ້າຮ່ວມດວ້ຍມາຕການທີ່ເຄັ່ງຄັດເຫລົ່ານີ້ກຳລັງຈະສົ່ງຜົນກະທົບຕໍ່ໂຄງ
ການສຳຣວດຂຸດຄົ້ນແຮ່ຫລາຽຊນິດໃນທອ້ງຖິ່ນດັ່ງກາວຢ່າງບໍ່ມີທາງເລືອກ ໂດຍສະ
ເພາະຢ່າງຍິ່ງເໝືອງແຮ່ບອກໄຊ ການປະກາດປິດປ່າໃນເຂດເມືອງປາກຊອ່ງແຂວງ
ຈຳປາສັກດິ໌ ກັບເຂດເມືອງອື່ນໆ ໃນແຂວງໄກ້ຄຽງເມື່ອທິດແລ້ວມານັ້ນຈະປິດກັ້ນໂຄງ
ການລົງທຶນເຫຼົ່ານັ້ນ ບໍ່ໃຫ້ສາມາດລ້ຳເຂົ້າໄປໃນເຂດປ່າສງວນແຫ່ງຊາດໄດ້ປະກາດ
ອອກມາຫລັງຈາກທາງການໄດ້ພົບວ່າມີການບຸກລຸກຕັດໄມ້ທຳລາຍປ່າປີລະ 300-
400 ເຮກຕາແລະ(1,800-ຫາ-2, 500 ໄຣ່) ໃນຊວ້ງປີໄກ້ໆ ຜ່ານມານີ້ ມາຕການ
ນີ້ຍັງມີຂື້ນຫລັງຈາກທາງການແຂວງໄດ້ເຕືອນໃຫ້ໂຄງການລົງທຶນຂນາດໃຫ່ຽຕ່າງໆ
ໂດຍສະເພາະຢ່າງຍິ່ງໂຄງການເໝືອງແຮ່ ຈະຕອ້ງທຳການສຶກສາຜົນກະທົບຕໍ່ສະພາບ
ແວດລອ້ມ ຕໍ່ເສຖກິດແລະສັງຄົມຢ່າງລະອຽດແລະຜ່ານການພິຈາຣະນາເສັຽກ່ອນຈຶ່ງ
ຈະສາມາດດຳເນີນການໄດ້-ເຂດປ່າທີ່ສັ່ງປິດຕາຍຄັ້ງນີ້ ມີພື້ນທີ່ລວມກັນເຖິງ-185-
000 ເຮກຕາ ແລະມີ (1-156-000 ໄຣ່ເສດ) ປະກອບດວ້ຽປ່າສງວນແຫ່ງຊາດດົງ
ຫົວສາວມີ(206-000 ໄຣ່ເສດ)ກັບປ່າສງວນແຫ່ງຊາດພູເພັຽໄມ້ເຂດບາ້ນຫວ້ຽຊາຍ
ມີ(283-000 ໄຣ່ເສັດ)ແລະປ່າອະນຸຮັກຕົ້ນນ້ຳອາ່ງເກບນ້ຳຫວ້ຽເຊົາມີ(506-000
ໄຣ່ເສດ) ປ່າຕົ້ນນ້ຳຫວ້ຽຈຳປີມີ(72-000 ໄຣ່ເສດ)ແລະປ່າຕົ້ນນ້ຳລຳເຊເສັດມີ(87
-500 ໄຣ່ເສດ)ທັງໝົດຄອບຄຸມພື້ນທີ່ສວ່ນໃຫ່ຽໃນເຂດເມືອງປາກຊອ່ງຊຶ່ງເປັນເຂດ
ສວ່ນກາເຟຂອງປະເທດແລະສວ່ນໃຫ່ຽຂອງທີ່ຣາບສູງບໍຣິເວັນ ໃນແຂວງສາຣະວັນ
ແລະອັດຕະປືລົງໄປຈົ່ນເຖິງແຂວງເຊກອງຕິດກັບຊາຍແດນຂເມນຄວາມຕອ້ງການ
ຢາງພາຣາໃນຕລາດ ໂລກສູງຂື້ນຫລາຽໃນຊວ່ງປີໄກ້ໆ ນີ້ໂດຍສະເພາະຢ່າງຍິ່ງໃນຈີນ
ຊຶ່ງເປັນຕລາດໃຫ່ຽໄດ້ທຳໃຫ້ນັກລົງທຶນຈາກປະເທດເພື້ອນບາ້ນຂອງລາວທັງຈາກຈີນ
ເອງ ຈາກວຽດນາມແລະໄທຍ໌ ຕ່າງເຂົ້າໄປສແວງຫາພື້ນດິນປູກພືດເສຖກິດຊນິດນີ້
ທາງການທອ້ງຖິ່ນປະກາດປິດຕາຍປ່າສງວນແຫ່ງຊາດ 2 ແຫ່ງພື້ນປ່າຕົ້ນ
ນ້ຳອີກ 3 ແຫ່ງໃນເຂດທີ່ຣາບສູງບໍຣິເວັນຄອບຄຸມເຂດເມືອງປາກຊອ່ງ

ແຂວງຈຳປາສັກ ສວນກາເຟ "ຂອງປະຊາຊົນ ກັບອີກ 10 ຫົວເມືອງໃນແຂວງສາລະ
ວັນແລະອັດຕະປືທີ່ຢູ່ຕິດກັນ -ສ່ວນພວກນັກລົງທຶນໄທຍອີກສ່ວນນຶ່ງໄດ້ເຂົ້າໄປສແວງຫາ
ທີ່ດິນໃນການທຳໄຮ່ອ້ອຍເພື່ອຜລິດນ້ຳຕານແລະສະກັດສານ ເອທານອນເພື່ອເປັນເຊື້ອ
ເພີງທາງເລືອກໃນຍຸກທີ່ນ້ຳມັນໃນຕຣາດ ໂລກຣາຄາພວມຂຶ້ນທຳສະຖິຕິສູງໃໝ່ມາເລື້ອຍໆ
ຫຼືປູກຍູຄາລິບຕັດທີ່ໃຊ້ຜລິດເຊື້ອກະດາດ -ບໍ່ພຽງແຕ່ເຂົ້າໄປສແວງຫາທີ່ດິນລົງທຶນເພາະ
ປູກດ້ວຍຕົນເອງພາຍໃຕ້ສັນຍາສັມປະທານຣະຍະຍາວ 25 ຫາ 30 ປີເທົ່ານັ້ນແຕ່ການ
ເຂົ້າໄປສົ່ງເສີມໃຫ້ຣາສດອນໃນທ້ອງຖິ່ນເພາະປູກແລະຜລິດແທນ ໂດຍຮັບຊື້ຜົນຜລິດ
ພາຍໃຕ້ຂໍ້ຕົກລົງກະເສດພັນທະສັນຍານັ້ນ ຍັງມີສ່ວນທຳໃຫ້ຣາສດອນບຸກລຸກເຂົ້າໄປ
ໃນທີ່ປ່າສງວນອີກດ້ວຍ -ທັງເບີດນີ້ອາດບໍ່ໃຊ້ເຣື້ອງງ່າຍອີກຕໍ່ໄປເມື່ອສະພາແຫ່ງຊາດ
ຂອງລາວຜ່ານຮ່າງກົດໝາຍທັງສອງສບັບອອກມາບັງຄັບໃຊ້ໃນວຽງຈັນກຳລັງຈະມີ
ໄຊນ່າທາວນ໌ແບບເຍົາວະຣາຊສ່ວນນັກສຶກສາທັງ 2 ຄົນນີ້ກຳລັງຕຽມຕົວເຂົ້າຮ່ວມ
ສແດງງານວັທນະທັມງານນຶ່ງທາງດ້ານໜ້າຂອງພຣະທາດຫລວງເປັນສ່ວນສຳຫລັບ
ນັກທ້ອງທ່ຽວກຳລັງຈະພັທນາໃຫ້ເປັນຍ່ານທຸຣະກິດການຄ້າທັນສມັຍຂອງເມືອງຫລວງ
ຄາດວ່າຈະມີຊາວຈີນປະມານ 3-000ກວ່າຄົນເຂົ້າໄປອາໃສຫຼືສັບຊ້ອນທາງການເມືອງ
ເພື່ອຈະຂັບໄລ່ປະຊາຊົນລາວຜູ້ຍາກຈົນອອກຈາກໃນເຂດນັ້ນເພາະສະນັ້ນທາງວິທີການ
ນຳພວກນາຍທຶນພັກຣັຖຈຶ່ງຫາທຶນສັກດີນາຜເລດການຄອມມຸນິສເຂົ້າມາຄອບຄອງປະ
ເທດລາວໃຫ້ເປັນຫົວເມືອງຂຶ້ນຂອງຕ່າງຊາດຊ້ຳບໍ່ພໍຍັງຂັບໄລ່ໃຫ້ຜູ້ຍິງນຸ່ມນ້ອຍຕ້ອງ
ແຕ່ງກາຍອອກນອກປະເພນີລາວເພາະຍ້ອນເຫັນກົກຂາຂ່າວຂອງສາວນ້ອຍວຽງຈັນ
ພວກພັກຣັຖຈຶ່ງຫັນເຂົ້າຫາເປື່ອຍເຍືອຍ ທີ່ພວກແມວລາວເຄີຍໄດ້ເວົ້າມາແລ້ວວ່າປະ
ເພນີລາວຢ່າປະຣະຖິ້ມຮີດສິບສອງຄອງສິບສີ່ຮີດຍີ່ຄອງຈຽງພວກນີ້ປາກກຮ້ອງເວົ້າງາມ
ແຕ່ໃຈມັນເປັນນັກກອບ ໂກຍເອົາຊັບສົມບັດຂອງປະຊາຊົນຜູ້ຍາກຈົນຄົນພັກຣັຖຂົ່ມ
ຂູ່ປະຊາຊົນດ້ວຽອຳນາດປາຍປືນອາກາເພາະເປັນໝາຮັບໃຊ້ແກວເໜືອ ຂ່າວຈາກ
ມວນຊົນລາວເສຣີຊົນ ທາງການລາວຮັບຫລັກການທົ່ວໄປໃຫ້ບໍຣິສັດຈາກຈີນເຂົ້າມາ
ລົງທຶນພັທນາພື້ນທີ່ໜອງບຶງມີເນື້ອທີ່ປະມານ 1-000 ເຮກຕາຫຼື 6-250 ໄຣ່ ທາງ
ດ້ານຫລັງພຣະທາດຫລວງເປັນຍ່ານທຸຣະກິດໃໝ່ຂອງເມືອງຫລວງ ແລະເປັນທີ່ຢູ່ອາ
ໃສຂອງພວກປະກອບການຂອງຊາວຈີນທີ່ເຂົາຈະມີໂຄງການນຳເອົາປະເທດລາວໄປ
ອີກແບບໃໝ່ດ້ວຍ -ເມື່ອກໍ່ສ້າງເສັດແລ້ວທີ່ນັ້ນກໍ່ຈະກາຍເປັນສູນກາງເສຖກິດແລະການ
ຄ້າແຫ່ງໃໝ່ຂອງນະຄອນຫລວງວຽງຈັນ ແລະເຊື່ອວ່າຈະມີຊາວຈີນປະມານ

3-000 ກວ່າຄົນຫຼືສອງເທົ່າເຂົ້າໄປອາໃສເພື່ອຂັບໄລ່ປະຊາຊົນລາວອອກຈາກເຂດ ນັ້ນແລະເຂົາຈະທຳທຸຣະກິດໃນນັ້ນ-ອັນນີ້ແລ້ວພວກເຮົາຈະມາກ່າວປວັດໃນອະດີດຕະ ການທີ່ຜ່ານມາ ວ່າໃນປະເທດລາວຫຼື ໃນນະຄອນຫລວງວຽງຈັນແຕ່ກອນນັ້ນວ່າມີປະ ຊາຊົນລາວ-9-000-ຄົນ ແຕ່ເປັນຄົນຕ່າງຊາດເຊັ່ນວຽດນາມມີຈຳນວນ-2-0000 ກວ່າຄົນ ເພາະສະນັ້ນປະເທດລາວຈຶ່ງກາຍໄປເປັນປະເທດຫົວເມືອງຂຶ້ນຂອງຕ່າງຊາດ ມາຕຣອດການ ຍ້ອນວ່າຜູ້ນຳປະເທດຢາກເປັນຂີ້ຂ້ອຍຂອງຄົນຊາດອື່ນແລະມີແຕ່ຢາກ ກອບໂກຍເອົາຊັບສົມບັດຂອງຊາດແລະຂອງປະຊາຊົນໄປເປັນຂອງຕົນເຊັ່ນໃນປີ 1975 ນັ້ນພັກຣັຖໄດ້ພາກັນປຸ້ນເອົາຊັບສົມບັດຂອງປະຊາຊົນຄື ຍຶດເອົາງົວຄວາຍໄຮ່ນາແລະ ເຮືອນຊານບ້ານຊ່ອງ ເພາະສະນັ້ນພວກເຮົາຈຶ່ງໄດ້ເວົ້າວ່າປະເທດລາວບໍ່ມີຈັກເທື່ອເລີຍ ວ່າຄົນລາວຈະໄດ້ປົກຄອງຕົນເອງແຕ່ໄດ້ເປັນຂີ້ຂ້ອຍຂອງຄົນຊາດອື່ນຕຣອດມາເທົ່າ ທຸກວັນນີ້-ສຳນັກຂ່າວສານຂອງປະເທດລາວ(ຂປລ)ລາຍງານເຣື້ອງນີ້ ເມື່ອທິດທີ່ຜ່ານ ມານັ້ນ-ຂປລ-ກ່າວວ່າໂຄງການດັ່ງກ່າວເປັນຄວາມຮ່ວມມືຣະຫວ່າງຣັຖບານ ສປປ ລາວ ກັບສາທາຣະນະຣັຖປະຊາຊົນຈີນ-ຝ່າຍທາງທະນາຄານພັທນາຈີນ ຣັຖບານໄດ້ ຕັດສິນໃຈຮັບໃນຫລັກການທີ່ຈະອະນຸຍາດໃຫ້ໃຊ້ພື້ນທີ່ປະມານ-1-000 ເຮກຕາໃນເຂດ ບຶງທາດຫລວງໃຫ້ນັກລົງທຶນຈີນກໍ່ສ້າງອາຄານທັນສມັຍແລະໃຫ້ເປັນສູນກາງການຄ້າ ຂອງນະຄອນຫຼວງວຽງຈັນທນ ຂປລ ອ້າງຄຳກ່າວຂອງນາຍຄຽງຄຳ ພຸດຈັນທະວົງສາ ເປັນເຈົ້າໜ້າທີ່ຂອງນະຄອນຫລວງ ເຣື້ອງນີ້ສຸດແລ້ວແຕ່ພັກຣັຖ-ສ່ວນເຄື່ອງສຽງແລະ ເຄື່ອງຂອງໃຊ້ໄຟຟ້າມາຈາກຈີນເປັນຣາຄາຖືກທີ່ສຸດໃນບັນດາເຄື່ອງມືຫລາຽ ຫາກບໍ່ ມີຄຸນນະພາບ ຖ້າໄປທຽບກັບສິນຄ້າຣາຄາແພງຈາກຍີປຸ່ນ ເກົາຫລີແລ້ວສິນຄ້າທີ່ຜລິດ ໃນຈີນນັ້ນກໍ່ຊື້ໄດ້ດ້ວຍຄວາມສະບາຍໃຈແຕ່ບໍ່ມີຄຸນນະພາບ-ເມື່ອພັທນາເຕັມຮູບແລ້ວອາ ນາບໍຣິເວນດັ່ງກ່າວຈະເປັນທີ່ຕັ້ງຂອງອຸດສາຫະກັມເບົາ ສະຖາບັນການເງິນ ສະຖາບັນ ທາງເສຖກິດຕຣອດຈົນເປັນບ່ອນທີ່ຢູ່ອາໃສຂອງຄົນຕ່າງຊາດປັດຈຸບັນເຈົ້າໜ້າທີ່ຂອງ ຝ່າຍລາວກັບເຈົ້າໜ້າທີ່ຈີນກຳລັງຮ່ວມກັນສຶກສາໃນລາຍຣະອຽດຕ່າງໆ ຢ່າງລັບຂອງ ດຣ ສິນລະວົງຄຸດໄພບູນເຈົ້າຄອງນະຄອນຫລວງໄດ້ນຳຄະນະໄປຕຣວດຢ້ຽມຣັຖເຂດ ບຶງທາດຫລວງເມື່ອທິດຜ່ານມາ ທັງນີ້ເປັນລາຍງານຂອງໜັງສືພິມວຽງຈັນໃໝ່ໃນປັດ ຈຸບັນພວກນັກລົງທຶນຈາກຈີນໄດ້ເຂົ້າໄປມີບົດບາດຢ່າງສູງໃນການພັທນາເສຖກິດ ຂອງລາວເພາະລາວບໍ່ມີຄວາມສາມາດບໍ່ມີການສຶກສາບໍ່ມີຄວາມຮູ້ຄວາມສາມາດໃນ ດ້ານການປົກຄອງແລະການພັທນາປະເທດໃຫ້ຈະເຣີນຜໍໄດ້ແຕ່ອາ

ໃສ່ຄົນຊາດຕ່າງຊາດ-ແຕ່ໃນປີນີ້ຈີນເປັນຜູ້ເຂົ້າລົງທຶນຫລາຍເປັນອັນດັບ 1 ແທນນັກລົງທຶນຈາກປະເທດໄທຍ໌ ທີ່ຕົກໄປຢູ່ອັນດັບ 3 ຖັດຈາກວຽດນາມໃນກາງປີ 2550 ນັ້ນໄດ້ມີການເປີດສູນການຄ້າແຫ່ງໃໝ່ ຂຶ້ນໃນເມືອງຫລວງຂອງລາວເປັນຫ້າງສັບສິນຄ້າທີ່ຈຳໜ່າຍສິນຄ້ານຳເຂົ້າຈາກຈີນເປັນສ່ວນໃຫ່ຍແລະເປັນຄູ່ແຂ່ງຂອງສູນການຄ້າຕຣາດເຊົ້າຂອງນັກລົງທຶນຈາກສິງຄະໂປ-ຢ່າງໃດກໍ່ຕາມຍັງມີໂຄງການລົງທຶນຂນາດໃຫ່ຍອີກຫລາຍໂຄງການ ໂດຍນັກລົງທຶນຈາກໄທຍ໌ ຊຶ່ງຄາດວ່າຈະສາມາດຮັບຍອດເງິນລົງທຶນໄດ້ໃນປີ 2551 ນີ້ ໃນນັ້ນຮວ່ມທັງການກໍ່ສ້າງເຂື່ອນໄຟຟ້າຂນາດໃຫ່ຍກັ້ນລຳນ້ຳໂຂງ ກຸ່ມບໍຣິສັດ-ການຊ່າງຈຳກັດ(ມະຫາຊົນ)ແລະໂຄງການພັທນາເຂດເສຖກິດສວັນເຊໂນ-ໂດຍບໍຣິສັດບໍຣິການທ່າອາກາສຍານຫຼື(TAG) ດວ້ຍຄົນລາວຮູ້ຈັກຈີນແລະວຽດນາມນອ້ຍເກີນໄປຫຼືບໍ່ ຈີນຫັດປູກຢາງທີ່ສິບສອງປັນນາມາກວ່າ 20 ປີແລ້ວແລະພັທນາພັນຢາງຂອງຕົວເອງຈົນໄດ້ຜົນຜລິດບໍ່ແພ້ພາກໄຕ້ຂອງໄທຍ໌ ສວ່ນວຽດນາມກໍ່ປູກຢາງຢ່າງຈິງຈັງມາສິບກວ່າປີແລ້ວເຊັ່ນກັນ ທັງສອງປະເທດນີ້ບໍ່ໂງ່ດອກຄົນລາວເອີຍຊິບອກໃຫ້-ຖ້າຢາກເຮັດສວນຢາງຕອ້ງໄປຖາມຄົນປັກໄຕ້ແລະໄປຖາມປະເທດມາເລຍ໌ເຊັ່ຽ ອິນໂດນີເຊັຽຜຸ້ນ(ຈີນ ທີ່ພາກັນເຂົ້າມາຢູ່ໃນລາວບໍ່ຍອມຮຽນເວົ້າພາສາລາວອີກດວ້ຍ ຄົນລາວຈຳເປັນຕອ້ງຮຽນພາສາຈີນເພື່ອຈະຕິດຕໍ່ກັບເຂົາຈີນທີ່ເຂົ້າມາຢູ່ໃນລາວຄືນາຍປຽບຢ່ານ້ຳໃຈຊາວລາວ ໂດຍຕົງທຳຢ່າງເໝືອນຄົນທີ່ໄຮ້ການສຶກສາຄວາມຈະເຮີນມາຈາກປ່າຊຶ່ງຄົນລາວເປັນຄົນທີ່ງຽບຮຽບຮອ້ຍ ມັນເຂົ້າກັນບໍ່ໄດ້ເລີຍກັບຈີນທີ່ເຂົ້າມາທຳເປັນເຈົ້າຂອງປະເທດ ວຽງຈັນໃນຊວ້ງເວລາ 5-6 ປີຜ່ານມານີ້ປຽ່ນໄປຫລາຍດຽວນີ້ສະຖານບັນເທີງມີສາວໜັ່ງລື່ນຫລາຍແຕ່ບໍ່ແພງສວ່ນໄປສນັບສນູນໃຫ້ເກີດຂື້ນມາຢ່າງກວ້າງຂວາງແລະຜູ້ໃຫ່ຍພາເຂົາເສັຽໄປດວ້ຍເມືອງລາວກໍ່ເປັນຢ່າງນີ້ລະຖ້າອອກກົດໝາຍເລື້ອຍໆຈະເປັນການຕັດໄມ້ການຄ້າປະເພນີແລະການຂາຍບໍຣິການທາງເພດແລະຮູບແບບຕ່າງໆກົດໝາຍໃຫ້ຕ່າງຊາດທີ່ດິນໃນລາວແພງຂຶ້ນແລະອື່ນໆ ເປັນພຽງໃຫ້ຕ່າງຊາດຮູ້ເທົ່ານັ້ນແຕ່ບໍ່ເຫັນເຈົ້າໜ້າທີ່ຄົນໃດເຮັດເດັດຂາດທຳຕາມເລີຍຂອ້ຍຢູ່ໃນວຽງຈັນໄດ້ໄປທຽ່ວໃນຕອນກາງຄືນທີ່ໃນເມືອງວຽງຈັນຂອ້ຍເຫັນຜູ້ຍິງບໍຣິການເຕັມໄປເບີດອອກໄປທາງນອກເມືອງຈັກນອ້ຍກໍ່ເປັນໜ້າຕົກໃຈເພາະມັນເຕມເຄື່ອນໄປເບີດຖ້າຢູ່ໃນຕົວເມືອງວຽງຈັນກໍ່ເໝືອນກັນຢູ່ຕາມຮ້ານອາຫານຕ່າງໆ ບໍ່ໜ້າເຊື່ອເລີຍວ່າລາວຊິເປັນຈັ່ງຊີ ເພາະວ່າພວກແນວລາວຮັກຊາດໄດ້ເຄີຍປະກາດມາຫລາຍໆເທື່ອແລ້ວວ່າເປັນຄົນຮັກຊາດແຕ່ທີ່ແທ້ແມ່ນເປັນຄົນຂາຍຊາດຂາຍແຜ່ນດິນອັນນີ້ແລ້ວເຂົາເອີ້ຍວ່າຄົນໜ້າກຽດ **ຖ້າອ່ານແລ້ວສົ່ງໃຫ້ເພື່ອນແນ**